**ດ່ວນທີ່ສຸດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------------

<u>ກະຊວງໂຍທາທິການ ແລະ ຂົນສົ່ງ</u>

ເລກທີ : 12971 /ຍທຂ.

ນະຄອນຫຼວງວຽງຈັນ, ວັນທີ : 25/8/2010

# ຄໍາສັ່ງເພີ້ມເຕີມ
## ຂອງລັດຖະມົນຕີວ່າການ
## ກ່ຽວກັບການເພີ້ມທະວີການຕິດຕາມ, ກວດກາວຽກງານບູລະນະຮັກສາທາງຫລວງ

<u>ຮຽນ</u> : ບັນດາທ່ານຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ບັນດາແຂວງ ແລະ ນະຄອນຫລວງວຽງຈັນ.

- ອີງຕາມດໍາລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 373/ນຍ, ລົງວັນທີ 22/10/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງໂຍທາທິການ ແລະ ຂົນສົ່ງ.
- ອີງຕາມຄໍາສັ່ງຂອງລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 8046/ຍທຂ, ລົງວັນທີ 18 ມິຖຸນາ 2009.

ໃນລະດູຝົນປີ 2010 ນີ້, ປະກົດວ່າໄດ້ເກີດມີພາຍຸລົມແຮງ ຕາມລະດູການ, ມີຝົນຕົກແຮງ, ຝົນຕົກລົນແກ່ຍາວ, ໂດຍສະເພາະ ຢູ່ບັນດາແຂວງພາກເໜືອ, ອັນໄດ້ເຮັດໃຫ້ແມ່ນໍ້າ ແລະ ຫວ້ຍຮ່ອງນໍ້າຕ່າງໆຢູ່ເຂດດັ່ງກ່າວໄຫລຊຸແຮງ, ເກີດມີນໍ້າຖ້ວມ, ນໍ້າອັ່ງ, ດິນເຈື່ອນຕັນທາງ, ສ້າງຄວາມເສັຍຫາຍໃຫ້ແກ່ເສັ້ນທາງ ແລະ ຂົວຈໍານວນນຶ່ງ ເຮັດໃຫ້ການຄົມມະ ນາຄົມຂົນສົ່ງ ຕາມເສັ້ນທາງເຫລົ່ານັ້ນ ມີຄວາມຫຍຸ້ງຍາກພໍສົມຄວນ. ດັ່ງນັ້ນ ເພື່ອຮັບປະກັນການສັນຈອນຕາມທາງຫລວງໃນທົ່ວປະເທດ, ໂດຍສະເພາະເສັ້ນທາງຫລວງແຫ່ງຊາດ ໃນສະເພາະໜ້າ ໃຫ້ມີຄວາມລົ່ງລຽນ ແລະ ປອດໄພ.

### ລັດຖະມົນຕີວ່າການ ຈຶ່ງອອກຄໍາສັ່ງເພີ້ມເຕີມ ດັ່ງນີ້:

1/. ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ເອົາໃຈໃສ່ເພີ້ມທະວີການຈັດຕັ້ງປະຕິບັດຄໍາສັ່ງຂອງລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 8046/ຍທຂ, ລົງວັນທີ 18 ມິຖຸ ນາ 2009 ພ້ອມທັງຕິດຕາມ, ກວດກາການຢ່າງເຂັ້ມງວດ ແລະ ລາຍງານຜົນການປະຕິບັດຄໍາສັ່ງດັ່ງກ່າວ ໃຫ້ກະຊວງຊາບຢ່າງເປັນປົກກະຕິ.

2/. ໃນກໍລະນີຫາກເກີດເຫດການສຸກເສີນ ທີ່ເກີດມີນໍ້າໄຫລຊຸຂົວ, ທາງ ຫລື ນໍ້າຖ້ວມທາງ ອັນເຮັດໃຫ້ເສັ້ນທາງຂາດ, ຂົວ ຫລື ເສັ້ນທາງຍຸບ ຫລື ມີຕົ້ນໄມ້ລົ້ມ, ມີຫີນ-ດິນເຈື່ອນທັບຕັນເສັ້ນທາງ ທີ່ບໍ່ສາມາດຮັບປະກັນການສັນຈອນໄດ້ຢ່າງປອດໄພນັ້ນ ແມ່ນ**ມອບໃຫ້ພະແນກ ຍທຂ ນະຄອນຫລວງວຽງຈັນ ແລະ ບັນດາແຂວງເຫລົ່ານັ້ນ** ສົມທົບກັບຫ້ອງການ ຍທຂ ເມືອງ ແລະ ອໍານາດການປົກຄອງທ້ອງຖິ່ນ ລະດົມໝົດທຸກກໍາລັງ ແລະ ພາຫະນະກົນຈັກຂອງຜູ້ປະກອບການຂົວທາງທີ່ມີໃນແຂວງຂອງຕົນ **ລົງມືແກ້ໄຂຢ່າງຮີບດ່ວນທີ່ສຸດ ໂດຍບໍ່ຈໍາເປັນຂໍຄໍາສັ່ງຈາກກະຊວງ**. ໃນນັ້ນ ເພື່ອຈັດຈ້າງບໍລິສັດຜູ້ຮັບເໝົາມາແກ້ໄຂສຸກເສີນ ໃຫ້ທັນການ ແມ່ນສາມາດດໍາເນີນການຈັດຈ້າງໂດຍກົງໄດ້ ໂດຍບໍ່ຜ່ານການປະມູນ ຫລື ທາບທາມຕາມລະບຽບການທີ່ມີ, ແຕ່ຕ້ອງບົນພື້ນຖານລາຄາທີ່ສົມເຫດສົມຜົນກັບຄວາມເປັນຈິງ. ພ້ອມກັນນັ້ນ ກໍ່ໃຫ້ປະສານ

ສົມທົບກັບກົມຂົວທາງ, ກະຊວງ ຍທຂ ກ່ຽວກັບການຄາດຄະເນບໍລິມາດ ແລະ ມູນຄ່າຂອງໜ້າວຽກຕົວຈິງ ທີ່ຕ້ອງປະຕິບັດ, ໂດຍຜ່ານຄຳເຫັນຂອງຄະນະນຳແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດນັ້ນພ້ອມ.

3/. ສຳລັບການຕິດຕາມ-ເຝົ້າລະວັງ ແລະ ການແກ້ໄຂປົກກະຕິ ເພື່ອມີມາດຕະການປ້ອງກັນໄວ້ລ່ວງໜ້າ ແນໃສ່ຮັບປະກັນການສັນຈອນຕາມເສັ້ນທາງຫລວງແຫ່ງຊາດ ໃຫ້ມີຄວາມລຶ່ງລ່ຽນ ແລະ ປອດໄພນັ້ນ ແມ່ນໃຫ້ປະຕິບັດຕາມຄຳສັ່ງຂອງລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 8046/ຍທຂ, ລົງວັນທີ 18 ມິຖຸນາ 2009.

ດັ່ງນັ້ນ ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມຄຳສັ່ງເພີ້ມເຕີມສະບັບນີ້.

ລັດຖະມົນຕີວ່າການ

ສົມມາດ ພົລເສນາ

+ ສຳເນົາສົ່ງ:
- ທ່ານລັດະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຄະນະເລຂາທິການລັດຖະບານ — ເພື່ອລາຍງານ
- ທ່ານເຈົ້າຄອງນະຄອນຫລວງ, ບັນດາທ່ານເຈົ້າແຂວງ — ເພື່ອຊາບ ແລະ ປະສານສົມທົບ
- ທ່ານຫົວໜ້າຫ້ອງວ່າການສະພາແຫ່ງຊາດ — ເພື່ອລາຍງານ